**ຕົວຢ່າງ,** ໜ້ານີ້ແມ່ນສຳລັບການອ້າງອີງເທົ່ານັ້ນ.

Employment Development Department
PO BOX 2530
RANCHO CORDOVA, CA 95741-2530

EDD Employment Development Department
State of California

**ຄຳຮ້ອງຂໍໃຫ້ຢືນຢັນຕົວຕົນ**

**ໝາຍເລກໂທຟຣີ EDD:**
1-866-401-2849

ຊື່ ແລະ ທີ່ຢູ່ຂອງຜູ້ຮຽກຮ້ອງ

SAMPLE CLIENT NAME
1234 SAMPLE ST.
ANY TOWN, CA99999-9999

ວັນທີສົ່ງໄປສະນີ:

ສຳລັບໃຊ້ໃນສຳນັກງານເທົ່ານັ້ນ:

ວັນທີທີ່ເລີ່ມມີຜົນນຳໃຊ້:

## ການຢືນຢັນຕົວຕົນທີ່ຈຳເປັນສຳລັບສິດຜົນປະໂຫຍດການວ່າງງານ

ຕ້ອງມີການແກ້ໄຂບັນຫາກ່ຽວກັບຕົວຕົນຂອງທ່ານ.
ພວກເຮົາຕ້ອງຢືນຢັນຕົວຕົນຂອງທ່ານເພື່ອປົກປ້ອງທ່ານຈາກກິດຈະກຳທີ່ອາດເປັນການສໍ້ໂກງ.
ໃນຂະນະທີ່ພວກເຮົາກຳນົດເງື່ອນໄຂສິດຂອງທ່ານ, ໃຫ້ສືບຕໍ່ຢືນຢັນເພື່ອຮັບສິດຜົນປະໂຫຍດ ຖ້າທ່ານສືບຕໍ່ວ່າງງານ ຫຼື ກຳລັງເຮັດວຽກໃນຈຳນວນຊົ່ວໂມງທີ່ໜ້ອຍລົງ.

ຖ້າທ່ານບໍ່ເຄີຍໄດ້ຮັບເງິນໃນການອ້າງສິດນີ້, ພວກເຮົາບໍ່ສາມາດປະມວນການຈ່າຍເງິນສຳລັບສິດຜົນປະໂຫຍດ ຈົນກວ່າທ່ານຈະຢືນຢັນຕົວຕົນ.

ຖ້າທ່ານໄດ້ຮັບເງິນຢ່າງໜ້ອຍໜຶ່ງຄັ້ງສຳລັບການອ້າງສິດນີ້, **ບັນຫາໃໝ່ກໍ່ຍັງຕ້ອງໄດ້ຮັບການແກ້ໄຂ.** ຖ້າພວກເຮົາບໍ່ສາມາດກຳນົດເງື່ອນໄຂສິດຂອງທ່ານພາຍໃນສອງອາທິດ, ພວກເຮົາຈະປະມວນການຈ່າຍເງິນຕາມເງື່ອນໄຂ. ທ່ານອາດຈຳເປັນຕ້ອງຈ່າຍເງິນຕາມເງື່ອນໄຂໃດໜຶ່ງຄືນ ຖ້າພວກເຮົາຄົ້ນພົບໃນພາຍຫຼັງວ່າທ່ານບໍ່ມີສິດສຳລັບສິດຜົນປະໂຫຍດເຫຼົ່ານັ້ນ.

### ການຢືນຢັນຕົວຕົນຂອງທ່ານ

ພວກເຮົາຕ້ອງຢືນຢັນຕົວຕົນຂອງທ່ານ ເຊິ່ງລວມເຖິງທີ່ຢູ່ຂອງທ່ານ, ວັນເກີດ ແລະ ຢືນຢັນວ່າໝາຍເລກປະກັນສັງຄົມ (SSN) ເກົ້າຕົວເລກສຳລັບການອ້າງສິດຂອງທ່ານເປັນໝາຍເລກດຽວກັນທີ່ໜ່ວຍງານບໍລິຫານປະກັນສັງຄົມ (SSA) ໄດ້ອອກໃຫ້ແກ່ທ່ານ. **ຄວາມລົ້ມເຫຼວທີ່ຈະປະຕິບັດຕາມຄຳຮ້ອງນີ້ສຳລັບເອກະສານຢືນຢັນຕົວຕົນ ຫຼື ຄຳຮ້ອງຂໍທີ່ໃຊ້ເວລາຫຼາຍກວ່າ 10 ວັນຕາມປະຕິທິນ ນັບຕັ້ງແຕ່ວັນທີທີ່ສົ່ງໄປສະນີຂອງແຈ້ງການສະບັບນີ້ ອາດສົ່ງຜົນໃຫ້ເກີດການປະຕິເສດສິດຜົນປະໂຫຍດ.** *ເອກະສານທີ່ຮັບໄດ້ສຳລັບການຢືນຢັນຕົວຕົນ* (DE 1326CD) ທີ່ແນບຕິດມາໄດ້ລະບຸຕົວຢ່າງແບບລະອຽດກ່ຽວກັບເອກະສານຢືນຢັນຕົວຕົນທີ່ສາມາດຍອມຮັບໄດ້. ອ້າງອີງໃສ່ໜ້າທີ 2 ຂອງແຈ້ງການສະບັບນີ້ສຳລັບຄຳສັ່ງກ່ຽວກັບວິທີການຍື່ນເອກະສານຂອງທ່ານ.

**ກະລຸນາໝາຍຕິກໃສ່ກ່ອງທີ່ເໝາະສົມຢູ່ຂ້າງລຸ່ມນີ້:**

☐ ຂ້າພະເຈົ້າ**ຍື່ນ**ການອ້າງສິດນີ້ດ້ວຍວັນທີທີ່ເລີ່ມມີຜົນນຳໃຊ້ຂ້າງເທິງ. *(ເຊັນ ແລະ ລົງວັນທີໃສ່ແຈ້ງການສະບັບນີ້ໃນທ້າຍເອກະສານ ແລະ ເອົາມັນໃສ່ຊອງຈົດໝາຍທີ່ສົ່ງໃຫ້ ພ້ອມກັບເອກະສານຢືນຢັນຕົວຕົນທີ່ລະບຸໄວ້ໃນທ້າຍແຈ້ງການສະບັບນີ້.)*

☐ ຂ້າພະເຈົ້າ**ບໍ່ໄດ້ຍື່ນ**ການອ້າງສິດດ້ວຍວັນທີທີ່ເລີ່ມມີຜົນນຳໃຊ້ຂ້າງເທິງ. *(ເຊັນ ແລະ ລົງວັນທີໃສ່ແຈ້ງການສະບັບນີ້ໃນທ້າຍເອກະສານ ແລະ ເອົາມັນໃສ່ຊອງຈົດໝາຍທີ່ສົ່ງໃຫ້. EDD ກວດສອບບົດລາຍງານການສໍ້ໂກງທັງໝົດ.)*

ຂ້າພະເຈົ້າເຂົ້າໃຈວ່າກົດໝາຍໄດ້ກຳນົດການລົງໂທດ ຖ້າຂ້າພະເຈົ້າໃຫ້ການທີ່ບໍ່ແມ່ນຄວາມຈິງ ຫຼື ປົດບັງຂໍ້ແທ້ຈິງເພື່ອຮັບເອົາສິດຜົນປະໂຫຍດ. ຂ້າພະເຈົ້າຂໍຢືນຢັນໂດຍຍອມຮັບການລົງໂທດຈາກການໃຫ້ການທີ່ບໍ່ແມ່ນຄວາມຈິງວ່າ ຂໍ້ມູນທີ່ຂ້າພະເຈົ້າໃຫ້ ແລະ ເອກະສານທີ່ຂ້າພະເຈົ້າຍື່ນລ້ວນແລ້ວແຕ່ເປັນຄວາມຈິງ ແລະ ຖືກຕ້ອງ ແລະ ເປັນຂອງຂ້າພະເຈົ້າ.

| ພິມຊື່ຂອງທ່ານ | ລາຍເຊັນ (ຈຳເປັນຕ້ອງມີ) | ໝາຍເລກໂທລະສັບ | ວັນທີ |
|---|---|---|---|

**ຕົວຢ່າງ,** ໜ້ານີ້ແມ່ນສຳລັບການອ້າງອີງເທົ່ານັ້ນ.

**ຄຳສັ່ງກ່ຽວກັບການຍື່ນເອກະສານຢືນຢັນຕົວຕົນຂອງທ່ານ**

ອ້າງອີງໃສ່*ເອກະສານທີ່ຮັບໄດ້ສຳລັບການຢືນຢັນຕົວຕົນ* (DE 1326CD) ສຳລັບຕົວຢ່າງແບບລະອຽດກ່ຽວກັບເອກະສານຢືນຢັນຕົວຕົນທີ່ສາມາດຍອມຮັບໄດ້.

ທ່ານມີສອງທາງເລືອກໃນການຍື່ນເອກະສານຢືນຢັນຂອງທ່ານ:

- **UI Online**SM - ເຂົ້າສູ່ລະບົບບັນຊີ UI Online ຂອງທ່ານ ແລະ ເລືອກອັບໂຫຼດເອກະສານໃນໜ້າຫຼັກ ເພື່ອສະໜອງເອກະສານຢືນຢັນຕົວຕົນຂອງທ່ານ. ນີ້ແມ່ນວິທີການທີ່ວ່ອງໄວ ແລະ ປອດໄພທີ່ສຸດໃນການສະໜອງເອກະສານ.
- **ສົ່ງໄປສະນີ** - ຖ້າທ່ານບໍ່ສາມາດອັບໂຫຼດເອກະສານຂອງທ່ານ, ສົ່ງສຳເນົາຂອງເອກະສານທີ່ຈຳເປັນທາງໄປສະນີໃຫ້ແກ່ພວກເຮົາ. **ວົງລາຍເຊັນ** ໃສ່ໜ້າທີ 1 ຂອງແຈ້ງການສະບັບນີ້ ແລະ ປະກອບມັນມາກັບເອກະສານຢືນຢັນຕົວຕົນຂອງທ່ານເມື່ອກຳລັງສົ່ງຄືນຊ່ອງຈົດໝາຍທີ່ສົ່ງໃຫ້. ຢ່າສົ່ງຄືນແບບຟອມ EDD ໃດໜຶ່ງໃນຊ່ອງຈົດໝາຍ.

  **ສຳຄັນ:** ປະກອບໝາຍເລກປະກັນສັງຄົມຂອງທ່ານຢ່າງຄົບຖ້ວນໃນເອກະສານທັງໝົດທີ່ສົ່ງທາງໄປສະນີ.

**ຮ້ອງຂໍເວລາເພີ່ມເຕີມ**

ທ່ານມີສິດທີ່ຈະຮ້ອງຂໍເວລາຫຼາຍຂຶ້ນໃນການເກັບກຳຂໍ້ມູນ ຫຼື ຮັບເອົາຄຳແນະນຳຈາກຕົວແທນ. ຖ້າທ່ານຕ້ອງການເວລາຫຼາຍຂຶ້ນ, ທ່ານ**ຕ້ອງຕິດຕໍ່ພວກເຮົາ**ໂດຍໂທລະສັບ ຫຼື ທາງໄປສະນີຕາມທີ່ຢູ່/ໝາຍເລກໂທລະສັບທີ່ຢູ່ໃນໜ້າທີ 1 **ພາຍໃນ 10 ວັນຕາມປະຕິທິນ** ນັບຕັ້ງແຕ່ວັນທີທີ່ສົ່ງໄປສະນີຂອງແຈ້ງການສະບັບນີ້. ຖ້າທ່ານບໍ່ໄດ້ຮັບເອກະສານທີ່ຈຳເປັນໃນທ້າຍຂອບເຂດເວລາ 10 ວັນ ຫຼື ບໍ່ມີການຮ້ອງຂໍເວລາເພີ່ມເຕີມ, ແລ້ວສິດຜົນປະໂຫຍດກໍ່ຈະຖືກປະຕິເສດ.

**ຂໍ້ຜິດພາດທີ່ສາມາດເກີດຂຶ້ນໄດ້ໂດຍກ່ຽວພັນກັບການຢືນຢັນຕົວຕົນ**

- **ວັນເກີດ**ທີ່ທ່ານສະໜອງໃຫ້ເມື່ອທ່ານຍື່ນການອ້າງສິດຂອງທ່ານແມ່ນແຕກຕ່າງຈາກວັນເກີດໃນ SSA ແລະ/ຫຼື ກົມພາຫະນະກົນຈັກ (DMV).
- **ວັນເກີດ**ທີ່ທ່ານສະໜອງໃຫ້ເມື່ອທ່ານຍື່ນການອ້າງສິດຂອງທ່ານແຕກຕ່າງຈາກວັນເກີດໃນ SSA ຫຼື DMV. ທ່ານອາດປ່ຽນຊື່ຂອງທ່ານ ແລະ ບໍ່ແຈ້ງຕໍ່ SSA ແລະ/ຫຼື DMV.
- SSN ທີ່ທ່ານສະໜອງໃຫ້ເມື່ອທ່ານຍື່ນການອ້າງສິດຂອງທ່ານແມ່ນບໍ່ຖືກຕ້ອງ. ທ່ານອາດລືມໝາຍເລກ ຫຼື ປ່ຽນໝາຍເລກ ເມື່ອທ່ານຍື່ນການອ້າງສິດສຳລັບການວ່າງງານຂອງທ່ານ ຫຼື ເມື່ອທ່ານສະໜອງມັນໃຫ້ແກ່ຜູ້ຈ້າງງານຂອງທ່ານ.

ພວກເຮົາບໍ່ປັບປຸງຂໍ້ມູນໃນ SSA ຫຼື DMV. ຖ້າ**ວັນເກີດ** ຫຼື **ຊື່**ຂອງທ່ານທີ່ໃຊ້ໃນ SSA ຫຼື DMV ແມ່ນບໍ່ຖືກຕ້ອງໂດຍອີງໃສ່ການກວດສອບການຖະແຫຼງ SSA ຂອງທ່ານ, ໃບອະນຸຍາດຂັບຂີ່ ຫຼື ບັດລະບຸຕົວຕົນໃນຮູບພາບ, ໃຫ້ຕິດຕໍ່ SSA ຫຼື DMV ໂດຍທັນທີເພື່ອດຳເນີນການປ່ຽນແປງ. ສືບຕໍ່ຍື່ນເອກະສານໃດໜຶ່ງທີ່ມີໃຫ້ແກ່ພວກເຮົາ ເພື່ອແກ້ໄຂບັນຫາການຢືນຢັນຕົວຕົນໃດໜຶ່ງພາຍໃນ 10 ວັນຕາມປະຕິທິນ ນັບຕັ້ງແຕ່ວັນທີຂອງແຈ້ງການສະບັບນີ້. ໃຫ້ສຳເນົາເອກະສານທີ່ມີການປັບປຸງແກ່ພວກເຮົາໃຫ້ໄວເທົ່າທີ່ມີ.

**ການອ້າງອີງຕາມກົດໝາຍ**

ພາກສ່ວນ 1253(a) ຂອງປະມວນກົດໝາຍປະກັນໄພສຳລັບການວ່າງງານແຫ່ງລັດຄາລິຟໍເນຍ (CUIC) ໄດ້ກຳນົດວ່າການອ້າງສິດທັງໝົດສຳລັບສິດຜົນປະໂຫຍດແມ່ນຕ້ອງຖືກຍື່ນຕາມລະບຽບການຂອງ EDD. ພາກສ່ວນ 1257(a) ຂອງ CUIC ກຳນົດວ່າ ຖ້າບຸກຄົນໃດໜຶ່ງໃຫ້ຂໍ້ມູນທີ່ບໍ່ແມ່ນຄວາມຈິງຕໍ່ EDD ເພື່ອຮັບເອົາສິດຜົນປະໂຫຍດ, ບຸກຄົນດັ່ງກ່າວອາດຖືກລົງໂທດ. ມາດຕາ 22, ປະມວນກົດລະບຽບແຫ່ງລັດຄາລິຟໍເນຍ, ພາກສ່ວນ 1326-2 (b)(2)(A) ກຳນົດວ່າ EDD ອາດຮ້ອງຂໍໃຫ້ຜູ້ຮຽກຮ້ອງຢືນຢັນ SSN ວ່າເປັນໝາຍເລກທີ່ອອກໃຫ້ໂດຍ SSA ຖ້າຂໍ້ມູນທີ່ມີໃຫ້ຕໍ່ EDD ລະບຸວ່າ SSN ອາດເປັນຂອງຄົນອື່ນ ຫຼື ເປັນໝາຍເລກທີ່ບໍ່ຖືກຕ້ອງ.